# ບົດກ່າວຮັບປະລິນຍາລັດຖະສາດດຸສະດີບັນດິດກິດຕິມະສັກ

## ຂອງ ພະນະທ່ານ ຈູມມາລີ ໄຊຍະສອນ, ປະທານປະເທດ

## ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ມະຫາວິທະຍາໄລທຳມະສາດ, ວັນທີ 13 ພຶດສະພາ 2009

- ທ່ານ ດຣ. ສຸເມດ ຕັນຕິເວດຊະກຸນ, ປະທານສະພາມະຫາວິທະຍາໄລທຳມະສາດ
- ທ່ານ ສຈ. ດຣ. ສຸຣະພົນ ນິຕິໄກຣພົດ, ອະທິການບໍດີມະຫາວິທະຍາໄລທຳມະສາດ
- ທ່ານ ຮຈ. ດຣ. ນະຄະຣິນ ເມດໄຕຣຣັດ, ຄະນະບໍດີຄະນະລັດຖະສາດ, ມາຫາວິທະຍາໄລທຳມະສາດ
- ທ່ານຍິງ ແລະ ທ່ານຊາຍ ທີ່ມີກຽດທັງຫລາຍ

ຂ້າພະເຈົ້າ ມີຄວາມປິ້ມປິຕິຊົມຊື່ນເປັນຢ່າງຍິ່ງ ແລະຖືເປັນກຽດຢ່າງສູງ ທີ່ມະຫາວິທະຍາໄລ ທຳມະສາດ ທີ່ມີຊື່ສຽງແຫ່ງນີ້ ໄດ້ມອບປະລິນຍາ ລັດຖະສາດ ດຸສະດີບັນດິດ ກິດຕິມະສັກ ໃຫ້ແກ່ຂ້າພະເຈົ້າໃນມື້ນີ້. ປະລິນຍາດັ່ງກ່າວ ແມ່ນມີຄວາມໝາຍມິດໄມຕີສຳຄັນຍິ່ງຕໍ່ຂ້າພະເຈົ້າ ກໍຄືຕໍ່ປະຊາຊົນລາວໃນທົ່ວປະເທດ ແລະເປັນການປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນດີງາມລະຫວ່າງສອງປະເທດ ລາວ ແລະໄທ.

ມະຫາວິທະຍາໄລທຳມະສາດແຫ່ງນີ້ ເປັນມະຫາວິທະຍາໄລເກົ່າແກ່ທີ່ມີຊື່ສຽງ ແລະມີປະຫວັດຄວາມເປັນມາອັນຍາວນານ ແຫ່ງໜຶ່ງຂອງໄທ ທີ່ເຕັມໄປດ້ວຍແຫຼ່ງຄວາມຮູ້ ແລະ ບຸກຄະລາກອນທີ່ມີຄວາມຮູ້ຄວາມສາມາດ ແລະ ມີວິໄສທັດອັນກວ້າງໄກ ໃນການພັດທະນາການສຶກສາ ແລະ ສະໜອງຄວາມຮູ້ໃຫ້ແກ່ຜູ້ທີ່ເຂົ້າມາສຶກສາຮ່ຳຮຽນ.

ນອກຈາກນີ້, ມະຫາວິທະຍາໄລແຫ່ງນີ້ ຍັງໄດ້ຮັບເອົານັກສຶກສາລາວເຂົ້າມາຮ່ຳຮຽນຫລາຍໆລຸ້ນຈົນເຖິງປະຈຸບັນ ຕາມກອບການຮ່ວມມືລະຫວ່າງ ສອງລັດຖະບານລາວ ແລະໄທ ຊຶ່ງສອດຄ່ອງກັບນະໂຍບາຍທີ່ເປັນບູລິມະສິດຂອງລັດຖະບານລາວໃນການກໍ່ສ້າງ

ຊັບພະຍາກອນມະນຸດ. ຂ້າພະເຈົ້າຫວັງວ່າ ມະຫາວິທະຍາໄລທີ່ມີຊື່ສຽງແຫ່ງນີ້ ຈະສືບຕໍ່ຮັບເອົານັກສຶກສາລາວຕໍ່ໄປ ຊຶ່ງຈະເປັນການປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບອັນດີງາມ ກໍຄືການເສີມຂະຫຍາຍການຮ່ວມມືດ້ານການສຶກສາ ລະຫວ່າງ ສອງປະເທດລາວ ແລະໄທ.

ເນື່ອງໃນໂອກາດ ວັນຄົບຮອບ 75 ປີ ຂອງການກໍ່ຕັ້ງ ມະຫາວິທະຍາໄລທຳມະສາດ ໃນເດືອນມິຖຸນາ ທີ່ຈະມາເຖິງນີ້, ຂ້າພະເຈົ້າ ຂໍອວຍພອນໃຫ້ ປະທານ, ອະທິການບໍດີ ແລະຄູອາຈານ ຂອງມະຫາວິທະຍາໄລແຫ່ງນີ້ ຈົ່ງມີແຕ່ຄວາມສຸກ ຄວາມຈະເລີນ ແລະປະສົບຜົນສຳເລັດ ໃນການສ້າງບັນດິດທີ່ມີຄວາມຮູ້, ຄວາມສາມາດ ແລະ ຈະຣິຍະທຳ ອອກມາຮັບໃຊ້ສັງຄົມ.

ອີກເທື່ອໜຶ່ງ, ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈຢ່າງສູງ ມາຍັງທ່ານປະທານສະພາມະຫາວິທະຍາໄລ, ທ່ານອະທິການບໍດີ ມະຫາວິທະຍາໄລ ທຳມະສາດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທີ່ໄດ້ຈັດພິທີໃນການມອບປະລິນຍາ ລັດຖະສາດ ດຸສະດີບັນດິດກິດຕິມະສັກໃຫ້ແກ່ຂ້າພະເຈົ້າໃນມື້ນີ້ຢ່າງຈົບງາມ ແລະ ຂໍອວຍພອນໃຫ້ບັນດາທ່ານທັງຫລາຍ ຈົ່ງມີແຕ່ຄວາມສຸກຄວາມຈະເລີນ ແລະ ປະສົບຜົນສຳເລັດໃນໜ້າທີ່ອັນມີກຽດຂອງທ່ານ.

ຂໍຂອບໃຈ